ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BOL-LPB
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ
Tel: 071 260700 Fax: 071 260718
Website: https://www.bol.gov.la/luangprabang

# ກອງປະຊຸມແລກປ່ຽນບົດຮຽນ
# ວຽກງານການຈັດຕັ້ງນະໂຍບາຍເງິນຕາຂອງ ທະນາຄານແຫ່ງ ສປປ ລາວ




ທະນາຄານ ແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໄດ້ຈັດກອງປະຊຸມແລກປ່ຽນວຽກງານການຈັດຕັ້ງນະໂຍບາຍເງິນຕາຂອງ ທະນາຄານແຫ່ງ ສປປ ລາວ ໃນຕອນແລງ ເວລາ 14:00 ໂມງ ວັນທີ 18 ກຸມພາ 2021 ຢູ່ຫ້ອງປະຊຸມ ຊັ້ນ I ທະນາຄານ ແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ໂດຍການເປັນປະທານຮ່ວມຂອງ ທ່ານ ແສງສົມພະບຸດ ຍອດສົມເຜືອງ ຮອງຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ຮອງສາດສະດາຈານ ແສງຈັນ ຈັນທະເສນ ອາຈານສອນວິຊາ ເສດຖະສາດມະຫາພາກ ອະດີດຮອງຄະນະບໍດີ ຄະນະເສດຖະສາດ ມະຫາວິທະຍາໄລແຫ່ງຊາດ, ມີຄະນະຈາກ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ, ຄະນະຄູອາຈານ ແລະ ນັກສຶກສາ ປະລິນຍາໂທ ຈາກ ມະຫາວິທະໄລສຸພານຸວົງ ເຂົ້າຮ່ວມ ທັງໝົດ 23 ທ່ານ.

ຈຸດປະສົງຂອງກອງປະຊຸມແມ່ນເພື່ອເປັນການແລກປ່ຽນບົດຮຽນ ທັງເປັນການສົມທຽບການນຳໃຊ້ທິດສະດີໃນຫ້ອງຮຽນ ແລະ ການຈັດຕັ້ງປະຕິບັດວຽກງານຕົວຈິງ ຂອງທະນາຄານແຫ່ງ ສປປ ລາວ. ໃນກອງປະຊຸມໄດ້ມີການບັນຍາຍ

ກ່ຽວກັບ ການຈັດຕັ້ງປະຕິບັດນະໂຍບາຍເງິນຕາຂອງ ທະນາຄານແຫ່ງ ສປປ ລາວ, ທີ່ຕັ້ງ, ພາລະບົດບາດ, ຂອບເຂດສິດ, ໜ້າທີ ແລະ ການເຄື່ອນໄຫວວຽກງານບາງດ້ານຂອງ ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຫຼວງພະບາງ ແລະ ຍັງໄດ້ມີການແລກປ່ຽນຫຼາຍບັນຫາ ຢ່າງກົງໄປກົງມາ ເຮັດໃຫ້ເປັນຂະບວນຟົດຟື້ນ ແລະ ສາມາດສ້າງຄວາມເຂົ້າໃຈໃຫ້ກັບ ນັກສຶກສາເປັນຢ່າງດີ ໃນການນໍາໃຊ້ທິດສະດີ ເພື່ອປະກອບເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.




ຂ່າວ: ເຄນສະຫວັດ ສຸກສະຫວັນ

ພາບ: ກັນຈະນາ ໄຊຍະວົງ

ຮັບຜິດຊອບໂດຍ: ໜ່ວຍຊາວໜຸ່ມຮາກຖານ ທຫລ.ຫຼບ

ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ